ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ 0174
ວັນທີ 2 MAR 2018

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 0529/ຫອຄ.ກຄພນ
ນະຄອນຫຼວງວຽງຈັນ, ວັນທີ 09 ມີນາ 2018

## ແຈ້ງການ

ເຖິງ: - ທ່ານປະທານ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກ໊ສລາວ.
- ທ່ານຜູ້ອຳນວຍການ ບໍລິສັດທີ່ດຳເນີນທຸລະກິດກ່ຽວກັບນ້ຳມັນເຊື້ອໄຟ.

ເລື່ອງ: ການຈັດຕັ້ງປະຕິບັດດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ.

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ.
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1273/ອຄ, ລົງວັນທີ 25 ກໍລະກົດ 2016.

ປະຈຸບັນ, ດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ ລົງວັນທີ 27 ຕຸລາ 2017 ໄດ້ປະກາດໃຊ້ຢ່າງເປັນທາງການ. ເນື້ອໃນຂອງດຳລັດໄດ້ກຳນົດແຈ້ງກ່ຽວກັບບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ, ບໍລິສັດຈຳໜ່າຍພາຍໃນ, ປ້ຳນ້ຳມັນເຊື້ອໄຟ ແລະ ບໍລິສັດໃຫ້ບໍລິການກ່ຽວກັບນ້ຳມັນເຊື້ອໄຟ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ຮັບປະກັນໄດ້ຜົນປະໂຫຍດຂອງລັດ, ຜູ້ປະກອບການ ແລະ ຜູ້ຊົມໃຊ້.

**ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ແລະ ປະຕິບັດດັ່ງນີ້:**

1. ບໍລິສັດທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຕາມຂໍ້ຕົກລົງເລກທີ 1785/ອຄ.ຄພນ, ລົງວັນທີ 7 ກັນຍາ 2009 ຕ້ອງກຳນົດຈຸດຢືນໃຫ້ຊັດເຈນວ່າ: ຈະສືບຕໍ່ເຄື່ອນໄຫວເປັນບໍລິສັດນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ, ບໍລິສັດຈຳໜ່າຍພາຍໃນ, ບໍລິສັດໃຫ້ເຊົ່າສາງນ້ຳມັນເຊື້ອໄຟ, ບໍລິການໃຫ້ເຊົ່າພາຫະນະຂົນສົ່ງນ້ຳມັນເຊື້ອໄຟ ຫຼື ຄວບບໍລິສັດ ແລ້ວສະເໜີດັດແກ້ທະບຽນວິສາຫະກິດ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ແລະ ດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.

2. ໄລຍະຂ້າມຜ່ານ 6 ເດືອນຕົ້ນປີ 2018 ການຢັ້ງຢືນແຜນການຈຳໜ່າຍນ້ຳມັນເຊື້ອໄຟ ແມ່ນປະຕິບັດຕາມເງື່ອນໄຂຂອງຂໍ້ຕົກລົງເລກທີ 1785/ອຄ.ຄພນ, ລົງວັນທີ 7 ກັນຍາ 2009. ສ່ວນການຢັ້ງຢືນແຜນການຈຳໜ່າຍນ້ຳມັນເຊື້ອໄຟ 6 ເດືອນທ້າຍປີ 2018 ແມ່ນພິຈາລະນາ ສະເພາະບໍລິສັດທີ່ໄດ້ ຕາມມາດຖານເງື່ອນໄຂຂອງດຳລັດດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ເທົ່ານັ້ນ.

3. ບຸກຄົນ, ນິຕິບຸກຄົນ ມີຈຸດປະສົງສ້າງຕັ້ງບໍລິສັດເພື່ອເຄື່ອນໄຫວທຸລະກິດກ່ຽວກັບນ້ຳມັນເຊື້ອໄຟ ຕ້ອງປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ແລະ ທີ່ກຳນົດໃນດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.

4. ສຳລັບການສ້າງຕັ້ງປ້ຳນ້ຳມັນເຊື້ອໄຟໃໝ່ນັ້ນ ແມ່ນໃຫ້ປະຕິບັດຕາມແຈ້ງການເລກທີ 0509/ຫອຄ.ກຄພນ, ລົງວັນທີ 5 ເມສາ 2017 ວ່າດ້ວຍຢຸດຕິການອະນຸຍາດສ້າງຕັ້ງສາງ ແລະ ປ້ຳຊື່ອຄາວ ຈົນກວ່າຈະມີແຈ້ງການໃໝ່ປ່ຽນແທນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ.

ຮອງຫົວໜ້າຫ້ອງການ

ດຣ.ບຸນເພັງ ສີບຸນເຮືອງ

<u>ບ່ອນສົ່ງ:</u>
- ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ເພື່ອຊາບ);
- ກົມການນຳເຂົ້າ ແລະ ສົ່ງອອກ (ເພື່ອຊາບ);
- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ (ເພື່ອຊາບ).